ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງເຕັກໂນໂລຊີ ແລະ ການສື່ສານ ເລກທີ 1465/ກຕສ
ນະຄອນຫຼວງວຽງຈັນ, ວັນທີ 05 ມິຖຸນາ 2026

# ຂໍ້ຕົກລົງ
# ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງກົມຄຸ້ມຄອງຄວາມຖີ່ວິທະຍຸສື່ສານ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 625/ນຍ, ລົງວັນທີ 22 ຕຸລາ 2021, ວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວຂອງ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ;
- ອີງຕາມ ແຈ້ງການ ຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 683/ຄຈສພ, ລົງວັນທີ 10 ເມສາ 2026;
- ອີງຕາມ ການຄົ້ນຄວ້າສະເໜີຂອງ ກົມຈັດຕັ້ງ ສະບັບເລກທີ 586 /ຈຕ, ລົງວັນທີ 04 ມິຖຸນາ 2026.

## ລັດຖະມົນຕີ ຕົກລົງ
## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ລະບອບແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງທາງດ້ານນິຕິກຳໃນການຈັດຕັ້ງເຄື່ອນໄຫວວຽກງານ ຂອງ ກົມຄຸ້ມຄອງຄວາມຖີ່ວິທະຍຸສື່ສານ ແນໃສ່ການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງຄວາມຖີ່ວິທະຍຸສື່ສານໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ກົມຄຸ້ມຄອງຄວາມຖີ່ວິທະຍຸສື່ສານ ຂຽນຫຍໍ້ "ກຄຖ" ຂຽນເປັນພາສາອັງກິດ "Department of Radio Frequency" ຂຽນຫຍໍ້ "DRF" ແມ່ນໂຄງປະກອບກົງຈັກ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ, ມີພາລະບົດບາດເປັນເສນາທິການ ໃຫ້ແກ່ ກະຊວງ ກ່ຽວກັບ ວຽກງານ ຄຸ້ມຄອງຄວາມຖີ່ວິທະຍຸສື່ສານ, ການສື່ສານຜ່ານດາວທຽມ, ຕາແໜ່ງວົງໂຄຈອນດາວທຽມ, ວຽກງານກວດກາ ແລະ ຢັ້ງຢືນມາດຕະຖານເຕັກນິກ ຂອງຄື້ນຄວາມຖີ່ວິທະຍຸສື່ສານ ອຸປະກອນໂທລະຄົມມະນາຄົມ ແລະ ໄອຊີທີ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ກົມຄື້ນຄວາມຖີ່ວິທະຍຸສື່ສານ ມີໜ້າທີ່ ດັ່ງນີ້:

1. ປະຕິບັດຕາມກົດໝາຍ, ດຳລັດ, ນິຕິກຳ ອື່ນຂອງຂັ້ນເທິງ ແລະ ນິຕິກຳຕ່າງໆຂອງກະຊວງ;
2. ຄົ້ນຄ້ວາ ຜັນຂະຫຍາຍແຜນນະໂຍບາຍ, ແຜນຍຸດທະສາດ, ແຜນຜັງແຫ່ງຊາດ ກ່ຽວກັບ ຄື້ນຄວາມຖີ່ວິທະຍຸສື່ສານ, ສ້າງແຜນການ, ແຜນງານ ແລະ ໂຄງການລະອຽດ ກ່ຽວກັບ ວຽກງານຄື້ນຄວາມຖີ່ວິທະຍຸສື່ສານ, ການສື່ສານຜ່ານດາວທຽມ ຕຳແໜ່ງວົງໂຄຈອນດາວທຽມ ແລະ ມາດຕະຖານເຕັກນິກຂອງອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ, ໂທລະຄົມມະນາຄົມ ແລະ ໄອຊີທີ ເພື່ອສະເໜີຕໍ່ຄະນະນຳກະຊວງພິຈາລະນາຮັບຮອງ ພ້ອມທັງຈັດຕັ້ງປະຕິບັດ, ຕິດຕາມກວດກາ ແລະ ສະຫຼຸບຖອດຖອນບົດຮຽນ;
3. ສ້າງຮ່າງ ແຜນຍຸດທະສາດ ແລະ ນະໂຍບາຍ ກ່ຽວກັບ ການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ, ການສື່ສານຜ່ານດາວທຽມ, ແຜນຜັງຈັດສັນຄື້ນຄວາມຖີ່ວິທະຍຸສື່ສານແຫ່ງຊາດ, ມາດຕະຖານແຫ່ງຊາດ ລະບຽບການເຕັກນິກຂອງອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ, ໂທລະຄົມມະນາຄົມ ແລະ ໄອຊີທີ, ບົດແນະນຳ ແລະ ກາໝາຍມາດຕະຖານເຕັກນິກ ຂອງອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ, ໂທລະຄົມມະນາຄົມ ແລະ ໄອຊີທີ, ສ້າງແຜນງານ, ແຜນງານ ແລະ ໂຄງການ ກ່ຽວກັບ ວຽກງານຕ່າງໆ ໃຫ້ແທດເໝາະກັບຄວາມຮຽກຮ້ອງຕ້ອງການໃນການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຂອງ ສປປ ລາວ, ການພັດທະນາຂອງເຕັກໂນໂລຊີການສື່ສານໃໝ່ ແລະ ເສດຖະກິດ-ສັງຄົມໃນແຕ່ລະໄລຍະ;
4. ຄຸ້ມຄອງ, ຈັດສັນ, ຈັດແບ່ງ, ຕິດຕາມ ກວດກາການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ແລະ ວັດແທກການກະຈາຍຄື້ນຄວາມຖີ່ວິທະຍຸສື່ສານ ຂອງສະຖານີຄື້ນຄວາມຖີ່ວິທະຍຸສື່ສານ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ, ມີຄວາມປອດໄພ, ສອດຄ່ອງກັບລະບຽບ, ກົດໝາຍ, ສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ;
5. ຄົ້ນຄວ້າການອະນຸຍາດ, ສືບຕໍ່, ໂຈະ, ຍົກເລີກ ຫຼື ຖອນ ໃບອະນຸຍາດການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ, ໃບຢັ້ງຢືນມາດຕະຖານເຕັກນິກ ຂອງອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ, ໂທລະຄົມມະນາຄົມ ແລະ ໄອຊີທີ, ໃບຕອບຮັບ ແລະ ຂຶ້ນທະບຽນ ການແຈ້ງຄວາມສອດຄ່ອງມາດຕະຖານເຕັກນິກ ຂອງຄື້ນຄວາມຖີ່ວິທະຍຸສື່ສານ ໂທລະຄົມມະນາຄົມ ແລະ ໄອຊີທີ, ກິດຈະການ ການສື່ສານຜ່ານດາວທຽມ ແລະ ຕຳແໜ່ງວົງໂຄຈອນດາວທຽມ ໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການ;
6. ຄົ້ນຄວ້າ ກວດກາ ແລະ ອອກໃບຢັ້ງຢືນມາດຕະຖານເຕັກນິກ ຂອງອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ, ໂທລະຄົມມະນາຄົມ ແລະ ໄອຊີທີ ເຊັ່ນ: RF, EMC, EMF, SAR, RoHS, Radio and Signaling, Electric Safety, ມາດຕະຖານການເຊື່ອມຕໍ່, ມາດຕະຖານ (Waste Electrical and Electronic Equipment Weee) ແລະ ອື່ນໆ ໃຫ້ສອດຄ່ອງກັບມາດຕະຖານສາກົນ;
7. ຄົ້ນຄວ້າ ສະເໜີຄະນະນຳກະຊວງ ຕສ ເພື່ອຮັບຮອງແຜນຈັດສັນຄື້ນຄວາມຖີ່ວິທະຍຸສື່ສານ ສຳລັບເຕັກໂນໂລຊີຕ່າງໆ ເຊັ່ນ: IMT-Advancesd (4G), IMT-2020 (5G), IMT-2030(6G), Internet of Things (IoT), HAPS, HIBS, Satellite, Intelligence Traffic System (ITS), RSTT, Earth Station in Motion (ESIM) ແລະ ອື່ນໆ ໃຫ້ສອດຄ່ອງກັບມາດຕະຖານສາກົນ;
8. ຄົ້ນຄວ້າ ການກຳນົດມາດຕະຖານຄວາມແຮງ ການກະຈາຍຄື້ນຄວາມຖີ່ວິທະຍຸສື່ສານ ຂອງລະບົບການສື່ສານ ເຊັ່ນ: ລະບົບໂທລະສັບເຄື່ອນທີ່, ວິທະຍຸກະຈາຍສຽງ ແລະ ໂທລະພາບ ຕາມກົດໝາຍ ແລະ ລະບຽບການ;
9. ອະນຸຍາດນຳເຂົ້າ, ສົ່ງອອກອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ, ອຸປະກອນການສື່ສານຜ່ານດາວທຽມ;

10. ຄົ້ນຄ້ວາ ການຂຶ້ນທະບຽນນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ແລະ ຕຳແໜ່ງວົງໂຄຈອນດາວທຽມນຳສະຫະພາບໂທລະຄົມມະນາຄົມສາກົນ ITU ແລະ ອົງການໂທລະຄົມມະນາຄົມ ອາຊີ - ປາຊີຟິກ APT;
11. ຄຸ້ມຄອງ, ຊຸກຍູ້, ຕິດຕາມ ແລະ ກວດກາ ການດຳເນີນກິດຈະການໃຫ້ບໍລິການ ການສື່ສານຜ່ານດາວທຽມ;
12. ຄົ້ນຄວ້າ ວິທີທາງແກ້ໄຂ ບັນຫາຄື້ນຄວາມຖີ່ວິທະຍຸສື່ສານລົບກວນ, ໃຫ້ສອດຄ່ອງກັບ ລະບຽບກົດໝາຍ, ສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ;
13. ຄົ້ນຄວ້າ, ສຶກສາ, ກຳນົດຫ້ອງທົດລອງພາຍໃນປະເທດທີ່ໄດ້ມາດຕະຖານ, ສະເໜີອົງການຄຸ້ມຄອງມາດຕະຖານເຕັກນິກ ຂອງອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ, ໂທລະຄົມມະນາຄົມ ແລະ ໄອຊີທີ ຂອງຕ່າງປະເທດ ເພື່ອຮັບຮອງເອົາຜົນການທົດລອງຂອງຫ້ອງທົດລອງຂອງ ສປປ ລາວ ແລະ ຮັບຮອງເອົາຜົນການທົດລອງຂອງຫ້ອງທົດລອງຂອງຕ່າງປະເທດ ພ້ອມທັງ ຕິດຕາມຄວາມສອດຄ່ອງທາງດ້ານລະບຽບການ ແລະ ມາດ ຕະຖານເຕັກນິກຂອງຫ້ອງກວດກາມາດຕະຖານດັ່ງກ່າວ ໃນກອບຮ່ວມມືວຽກງານ Mutual Recognition Agreement/ Arrangement (MRA) ກັບຕ່າງປະເທດ ແລະ ອົງການສາກົນ ທີ່ ສປປ ລາວ ເປັນພາຄີ;
14. ພົວພັນ ຮ່ວມມື ແລະ ປະສານງານກັບພາກສ່ວນທີ່ກ່ຽວຂ້ອງຢູ່ພາຍໃນ, ຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບ ວຽກງານຄື້ນຄວາມຖີ່ວິທະຍຸສື່ສານ, ມາດຕະຖານເຕັກນິກ ຂອງອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ, ໂທລະຄົມມະນາຄົມ ແລະ ໄອຊີທີ, Landing Rights ແລະ ຕຳແໜ່ງວົງໂຄຈອນດາວທຽມ;
15. ຄົ້ນຄວ້າ ແລະ ຮັບຮອງ ມາດຕະຖານເຕັກນິກ ແລະ ຄື້ນຄວາມຖີ່ວິທະຍຸສື່ສານ ໃນກອງປະຊຸມສາກົນ;
16. ຄົ້ນຄວ້າ, ຈັດ ແລະ ເຂົ້າຮ່ວມກອງປະຊຸມຕ່າງໆດ້ານວິຊາການ ກ່ຽວກັບ ວຽກງານຄື້ນຄວາມຖີ່ວິທະຍຸສື່ສານ ວຽກງານການສື່ສານຜ່ານດາວທຽມ, ວຽກງານມາດຕະຖານເຕັກນິກ ຂອງອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ, ໂທລະຄົມມະນາຄົມ ແລະ ໄອຊີທີ ຢູ່ພາຍໃນ ແລະ ຕ່າງປະເທດ;
17. ຄົ້ນຄວ້າ, ສ້າງ ແລະ ປັບປຸງນິຕິກຳ ກ່ຽວກັບ ອັດຕາຄ່າທຳນຽມ ແລະ ຄ່າບໍລິການວິຊາການດ້ານຄື້ນຄວາມຖີ່ວິທະຍຸສື່ສານ, ຄ່າມາດຕະຖານເຕັກນິກ ຂອງອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ, ໂທລະຄົມມະນາຄົມ ແລະ ໄອຊີທີ, ການຕອບຮັບການແຈ້ງຄວາມສອດຄ່ອງ, ວຽກງານການສື່ສານຜ່ານດາວທຽມ ແລະ ຕຳແໜ່ງວົງໂຄຈອນດາວທຽມ ໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວ ຂອງເສດຖະກິດສັງຄົມໃນແຕ່ລະໄລຍະ;
18. ເກັບກຳສະຖິຕິການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ແລະ ການສື່ສານຜ່ານດາວທຽມ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ;
19. ຄົ້ນຄວ້າ ອອກໃບສັ່ງມອບ ຄ່າທຳນຽມ, ຄ່າບໍລິການ, ຄ່າປັບໃໝ ດ້ານຄື້ນຄວາມຖີ່ວິທະຍຸສື່ສານ, ການສື່ສານຜ່ານດາວທຽມ ແລະ ຕຳແໜ່ງວົງໂຄຈອນດາວທຽມ, ການກວດກາ ແລະ ຢັ້ງຢືນມາດຕະຖານເຕັກນິກຂອງອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ, ໂທລະຄົມມະນາຄົມ ແລະ ໄອຊີທີ, ການຕອບຮັບການແຈ້ງຄວາມສອດຄ່ອງ ແລະ ກາໝາຍມາດຕະຖານເຕັກນິກ;
20. ສ້າງແຜນການເຄື່ອນໄຫວວຽກງານຂອງກົມ ປະຈຳເດືອນ, ງວດ ແລະ ປີ, ແຜນລາຍຮັບ-ລາຍຈ່າຍ ດ້ານວິຊາການ ຂອງກົມ, ນຳໃຊ້ລາຍຮັບວິຊາການ ຕາມລະບຽບການ ແລະ ຕາມການຕົກລົງເຫັນດີຂອງຄະນະນຳກະຊວງ ໃຫ້ແທດເໝາະ ກັບທິດທາງ ແລະ ແຜນການລວມ ຂອງ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ;
21. ໂຄສະນາ, ເຜີຍແຜ່ນິຕິກຳ ແລະ ຝຶກອົບຮົມທາງດ້ານວິຊາການ, ເຕັກໂນໂລຊີໃໝ່ໆທີ່ ກ່ຽວກັບ ຄື້ນຄວາມຖີ່ວິທະຍຸສື່ສານ, ມາດຕະຖານເຕັກນິກຂອງອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານໂທລະຄົມມະນາຄົມ ແລະ ໄອຊີທີ ແລະ ວຽກງານການສື່ສານຜ່ານດາວທຽມ;
22. ຕິດຕາມ, ກວດກາ ມາດຕະຖານເຕັກນິກ ຂອງອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ, ໂທລະຄົມມະນາຄົມ ແລະ ໄອຊີທີ ແບບປົກກະຕິ, ແບບແຈ້ງໃຫ້ຮູ້ລ່ວງໜ້າ ແລະ ແບບກະທັນຫັນ ຫຼັງຈາກໄດ້ຮັບການຢັ້ງຢືນ

ແລະ ຕອບຮັບການແຈ້ງຄວາມສອດຄ່ອງມາດຕະຖານເຕັກນິກ ອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານໂທລະຄົມມະນາຄົມ ແລະ ໄອຊີທີ;

23. ຮັບຄໍາຮ້ອງທຸກ ແລະ ແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບ ການນໍາໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ, ມາດຕະຖານເຕັກນິກ ຂອງອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ, ໂທລະຄົມມະນາຄົມ ແລະ ໄອຊີທີ ແລະ ວຽກງານການສື່ສານຜ່ານດາວທຽມ;
24. ຢຸດຕິການນໍາໃຊ້, ຖອນການຕິດຕັ້ງ ແລະ ອາຍັດ ອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ, ໂທລະຄົມມະນາຄົມ ແລະ ໄອຊີທີ ທີ່ນໍາໃຊ້ບໍ່ຖືກຕ້ອງຕາມກົດໝາຍ ແລະ ບໍ່ສອດຄ່ອງຕາມມາດຕະຖານເຕັກນິກ;
25. ຄຸ້ມຄອງ, ຊີ້ນໍາ, ສົ່ງເສີມ, ຕິດຕາມກວດກາ ແລະ ປະເມີນຜົນ ການນໍາໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ, ມາດຕະຖານເຕັກນິກ ຂອງອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ, ໂທລະຄົມມະນາຄົມ ແລະ ໄອຊີທີ ແລະ ການສື່ສານຜ່ານດາວທຽມ ໃນຂອບເຂດທົ່ວປະເທດ ໂດຍການປະສານສົມທົບກັບບັນດາຂະແໜງການ ຢູ່ສູນກາງ ແລະ ທ້ອງຖິ່ນຢ່າງເປັນປົກກະຕິ;
26. ຂຶ້ນແຜນເຄື່ອນໄຫວໃນການຊຸກຍູ້, ຕິດຕາມ, ຄຸ້ມຄອງ, ບໍາລຸງຮັກສາ ແລະ ສ້ອມແປງ ຊັບສິນທັງໝົດພາຍໃນກົມ ແລະ ສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານຂອງກົມ ໃຫ້ຂັ້ນເທິງເປັນປົກກະຕິ;
27. ຄຸ້ມຄອງການຈັດຕັ້ງ, ພະນັກງານ, ຂຶ້ນແຜນບໍາລຸງກໍ່ສ້າງ ແລະ ປະຕິບັດນະໂຍບາຍຕໍ່ພະນັກງານ;
28. ຄົ້ນຄ້ວາ, ສ້າງ, ແຜນການເຄື່ອນໄຫວວຽກງານປະຈໍາປີ ຂອງກົມ ເພື່ອສະເໜີຕໍ່ຄະນະນໍາກະຊວງພິຈາລະນາ;
29. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຂອງ ຄະນະນໍາກະຊວງເຕັກໂນໂລຊີ ແລະ ການສື່ສານ.

**ມາດຕາ 4 ຂອບເຂດສິດ**

ກົມຄື້ນຄວາມຖີ່ວິທະຍຸສື່ສານ ມີສິດ ດັ່ງນີ້:

1. ສະເໜີສ້າງ, ປັບປຸງ ຫຼື ລົບລ້າງນິຕິກໍາ ກ່ຽວກັບ ວຽກງານຄື້ນຄວາມຖີ່ວິທະຍຸສື່ສານ, ມາດຕະຖານເຕັກນິກ ຂອງອຸປະກອນ ຄື້ນຄວາມຖີ່ວິທະຍຸສື່ສານ ໂທລະຄົມມະນາຄົມ ແລະ ໄອຊີທີ ການສື່ສານຜ່ານດາວທຽມ ແລະ ຕໍາແໜ່ງວົງໂຄຈອນດາວທຽມ;
2. ສະເໜີແຜນການ, ແຜນງານ, ໂຄງການ ກ່ຽວກັບ ວຽກງານຄື້ນຄວາມຖີ່ວິທະຍຸສື່ສານ, ມາດຕະຖານເຕັກນິກ ຂອງອຸປະກອນ ຄື້ນຄວາມຖີ່ວິທະຍຸສື່ສານ ໂທລະຄົມມະນາຄົມ ແລະ ໄອຊີທີ, ການສື່ສານຜ່ານດາວທຽມ ແລະ ຕໍາແໜ່ງວົງໂຄຈອນດາວທຽມ;
3. ຈັດສັນ, ຈັດແບ່ງ ແລະ ຕິດຕາມ, ກວດກາ ການນໍາໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ແລະ ວັດແທກການກະຈາຍຄື້ນຄວາມຖີ່ ຂອງສະຖານີຄື້ນຄວາມຖີ່ວິທະຍຸສື່ສານ;
4. ອະນຸຍາດ, ສືບຕໍ່, ໂຈະ, ຍົກເລີກ ຫຼື ຖອນໃບອະນຸຍາດນໍາໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ, ໃບຢັ້ງຢືນມາດຕະຖານເຕັກນິກ ຂອງອຸປະກອນ ຄື້ນຄວາມຖີ່ວິທະຍຸສື່ສານ ໂທລະຄົມມະນາຄົມ ແລະ ໄອຊີທີ, ໃບຕອບຮັບ ການແຈ້ງຄວາມສອດຄ່ອງມາດຕະຖານເຕັກນິກ, ກິດຈະການການສື່ສານຜ່ານດາວທຽມ ແລະ ຕໍາແໜ່ງວົງໂຄຈອນດາວທຽມ;
5. ປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ຢູ່ພາຍໃນ, ຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບ ວຽກງານຄື້ນຄວາມຖີ່ວິທະຍຸສື່ສານ, ມາດຕະຖານເຕັກນິກ ຂອງອຸປະກອນ ຄື້ນຄວາມຖີ່ວິທະຍຸສື່ສານ ໂທລະຄົມມະນາຄົມ ແລະ ໄອຊີທີ, ການສື່ສານຜ່ານດາວທຽມ ແລະ ຕໍາແໜ່ງວົງໂຄຈອນດາວທຽມ;
6. ສະເໜີ ຄະນະນໍາກະຊວງ ຕສ ເພື່ອຮັບຮອງເຕັກໂນໂລຊີການສື່ສານໃໝ່ ເຊັ່ນ: IMT-Advancesd (4G), IMT-2020 (5G), IMT-2030(6G), Internet of Things (IoT), HAPS, HIBS, Satellite, Intelligence Traffic System (ITS), RSTT, Earth Station in Motion (ESIM) ແລະ ອື່ນໆ ໃຫ້ສອດຄ່ອງກັບ ມາດຕະຖານສາກົນໃນແຕ່ລະໄລຍະ;

7. ແຈ້ງຂຶ້ນທະບຽນ ການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ແລະ ຕຳແໜ່ງວົງໂຄຈອນດາວທຽມ ນຳສະຫະພາບໂທລະຄົມມະນາຄົມສາກົນ (ITU), ອົງການໂທລະຄົມມະນາຄົມອາຊີ-ປາຊີຟິກ (APT);
8. ສະເໜີ ຄະນະນຳກະຊວງ ຕສ ເພື່ອຈັດການປະມູນສິດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ທີ່ສ້າງລາຍຮັບສູງ;
9. ກວດກາ ແລະ ຢັ້ງຢືນ ມາດຕະຖານເຕັກນິກ ຂອງອຸປະກອນ ຄື້ນຄວາມຖີ່ວິທະຍຸສື່ສານ ໂທລະຄົມມະນາຄົມ ແລະ ໄອຊີທີ;
10. ອະນຸຍາດນຳເຂົ້າ, ສົ່ງອອກ ອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ;
11. ກວດກາ ແລະ ຢັ້ງຢືນມາດຕະຖານ ເຕັກນິກອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ ໂທລະຄົມມະນາຄົມ ແລະ ໄອຊີທີເຊັ່ນ: RF, EMC, EMF, SAR, RoHS, Radio and Signaling, Electric Safety, ມາດຕະຖານການເຊື່ອມຕໍ່, ມາດຕະຖານ (Waste Electrical and Electronic Equipment Weee ) ແລະ ອື່ນໆ ໃຫ້ສອດຄ່ອງກັບມາດຕະຖານສາກົນ;
12. ພົວພັນ, ຮ່ວມມື, ເຈລະຈາ, ເຊັນບົດບັນທຶກຄວາມເຂົ້າໃຈ, ສັນຍາ, ອານຸສັນຍາ ຫຼື ຂໍ້ຜູກພັນອື່ນໆ ກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບ ວຽກງານຄື້ນຄວາມຖີ່ວິທະຍຸສື່ສານ, ມາດຕະຖານເຕັກນິກ ຂອງອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ ໂທລະຄົມມະນາຄົມ ແລະ ໄອຊີທີ ແລະ ວຽກງານການສື່ສານຜ່ານດາວທຽມ ຢູ່ພາຍໃນ, ຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ຕາມການມອບໝາຍຂອງຄະນະນຳກະຊວງ;
13. ປະສານສົມທົບ ກັບບັນດາຂະແໜງການທີ່ກ່ຽວຂ້ອງ ຢູ່ສູນກາງ ແລະ ທ້ອງຖິ່ນ ເກັບກຳສະຖິຕິ, ຕິດຕາມ, ກວດກາ ການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ, ການສື່ສານຜ່ານດາວທຽມ ແລະ ມາດຕະຖານເຕັກນິກຂອງອຸປະກອນ ຄື້ນຄວາມຖີ່ວິທະຍຸສື່ສານ ໂທລະຄົມມະນາຄົມ ແລະ ໄອຊີທີ ໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການ;
14. ອອກແຈ້ງການ, ຄຳສັ່ງ, ຄຳແນະນຳ ກ່ຽວກັບ ການປະຕິບັດຂໍ້ຕົກລົງ ແລະ ລະບຽບການອື່ນໆ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງຕ່າງໆ;
15. ສະເໜີ ຫາຄະນະນຳກະຊວງ ຕສ ໃນການສ້າງຕັ້ງ, ປັບປຸງ, ຍຸບເລີກ ກົງຈັກການຈັດຕັ້ງ, ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ ແລະ ຊັບຊ້ອນພະນັກງານຂອງກົມ ໃຫ້ສອດຄ່ອງກັບລະບຽບການທີ່ກ່ຽວຂ້ອງ ແລະ ສະພາບການຂະຫຍາຍຕົວ ຂອງວຽກງານໃນແຕ່ລະໄລຍະ;
16. ຈັດເກັບລາຍຮັບ ຄ່າທຳນຽມ, ຄ່າບໍລິການ ດ້ານການກວດກາ ແລະ ຢັ້ງຢືນມາດຕະຖານເຕັກນິກ ຂອງອຸປະກອນ ຄື້ນຄວາມຖີ່ວິທະຍຸສື່ສານ ໂທລະຄົມມະນາຄົມ ແລະ ໄອຊີທີ, ການຕອບຮັບການແຈ້ງຄວາມສອດຄ່ອງ ແລະ ການໝາຍມາດຕະຖານເຕັກນິກ;
17. ຈັດເກັບຄ່າປັບໃໝ ດ້ານຄື້ນຄວາມຖີ່ວິທະຍຸສື່ສານ, ການສື່ສານຜ່ານດາວທຽມ, ການກວດກາ ແລະ ຢັ້ງຢືນມາດຕະຖານເຕັກນິກຂອງອຸປະກອນ ໂທລະຄົມມະນາຄົມ ແລະ ໄອຊີທີ ແລະ ການໝາຍມາດຕະຖານເຕັກນິກ;
18. ຄຸ້ມຄອງ, ນຳໃຊ້ ພາຫະນະ, ວັດຖຸອຸປະກອນ, ຊັບສິນລວມຂອງກົມ ແລະ ນຳໃຊ້ງົບປະມານລາຍຮັບຈາກການເຄື່ອນໄຫວວຽກງານ ໃຫ້ຖືກຕ້ອງຕາມລະບຽບການ ທີ່ກຳນົດໄວ້ ແລະ ຕາມການຕົກລົງເຫັນດີ ຂອງຂັ້ນເທິງ;
19. ສະເໜີ ຂັ້ນເທິງ ກ່ຽວກັບ ການປະຕິບັດນະໂຍບາຍ, ເລື່ອນຊັ້ນ/ຂັ້ນ, ບຳລຸງ, ກໍ່ສ້າງ ແລະ ປະຕິບັດວິໄນຕໍ່ພະນັກງານ-ລັດຖະກອນ ພາຍໃນກົມ;
20. ນຳໃຊ້ງົບປະມານ ລາຍຮັບວິຊາການ ຂອງກົມ ຕາມການຕົກລົງເຫັນດີຂອງຄະນະນຳກະຊວງ ຕສ;
21. ເຂົ້າຮ່ວມ ແລະ ຈັດກອງປະຊຸມຕ່າງໆດ້ານວິຊາການ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການເຫັນດີ ຂອງຄະນະນຳກະຊວງ;
22. ປະຕິບັດສິດອື່ນໆຕາມການມອບໝາຍ ຂອງຄະນະນຳກະຊວງເຕັກໂນໂລຊີ ແລະ ການສື່ສານ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ກົມຄົ້ນຄວາມຖີ່ວິທະຍຸສື່ສານ ມີໂຄງປະກອບກົງຈັກ ດັ່ງລຸ່ມນີ້:

1. ພະແນກ ສັງລວມ, ນະໂຍບາຍ ແລະ ຮ່ວມມື;
2. ພະແນກ ຈັດສັນ ແລະ ອະນຸຍາດ ຄົ້ນຄວາມຖີ່ວິທະຍຸສື່ສານ;
3. ພະແນກ ກວດກາ ແລະ ແກ້ໄຂ ຄົ້ນຄວາມຖີ່ວິທະຍຸສື່ສານ;
4. ພະແນກ ຄຸ້ມຄອງການສື່ສານຜ່ານດາວທຽມ;
5. ພະແນກ ມາດຕະຖານເຕັກນິກອຸປະກອນ ຄົ້ນຄວາມຖີ່, ໂທລະຄົມມະນາຄົມ ແລະ ໄອຊີທີ.

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

ກົມຄົ້ນຄວາມຖີ່ວິທະຍຸສື່ສານ ມີໂຄງປະກອບບຸກຄະລາກອນ ດັ່ງລຸ່ມນີ້:

1. ຫົວໜ້າກົມຄົ້ນຄວາມຖີ່ວິທະຍຸສື່ສານ 1 ທ່ານ, ຮັບຜິດຊອບຕໍ່ລັດຖະມົນຕີ ແລະ ຮອງລັດຖະມົນຕີ ກ່ຽວກັບ ຜົນສໍາເລັດ ແລະ ຂໍ້ຂາດຕົກບົກຜ່ອງ ໃນການປະຕິບັດວຽກງານຂອງຕົນ;
   ໃນເວລາຫົວໜ້າກົມ ຕິດຂັດ ຕ້ອງມອບສິດ ໃຫ້ຮອງຫົວໜ້າກົມ ທ່ານໃດໜຶ່ງ ຮັກສາການແທນ;
2. ຮອງຫົວໜ້າກົມ ຈໍານວນໜຶ່ງ ຊ່ວຍຫົວໜ້າກົມ ຊີ້ນໍາວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ການມອບໝາຍ, ຮັບຜິດຊອບຕໍ່ຫົວໜ້າກົມ ກ່ຽວກັບ ຜົນສໍາເລັດ ແລະ ຂໍ້ຂາດຕົກບົກຜ່ອງ ຂອງວຽກງານທີ່ຕົນຊີ້ນໍາ;
   ຮອງຫົວໜ້າກົມ ຜູ້ຮັກສາການແທນຕ້ອງລາຍງານວຽກງານທີ່ໄດ້ຈັດຕັ້ງປະຕິບັດ ໃນໄລຍະຮັກສາການແທນນັ້ນ ໃຫ້ຫົວໜ້າກົມພາຍຫຼັງກັບມາປະຈໍາການ.
3. ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ລັດຖະກອນວິຊາການ ຈໍານວນໜຶ່ງ ຕາມການກໍານົດຕໍາແໜ່ງງານ;
   ສໍາລັບການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ໜ້າທີ່ຂອງແຕ່ລະພະແນກ

**ມາດຕາ 7 ໜ້າທີ່ຂອງພະແນກ ສັງລວມ, ນະໂຍບາຍ ແລະ ຮ່ວມມື**

ພະແນກ ສັງລວມ, ນະໂຍບາຍ ແລະ ຮ່ວມມື ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າຜັນຂະຫຍາຍບັນດາມະຕິ, ຄໍາສັ່ງ, ຄໍາແນະນໍາ ຂອງກົມ ໃຫ້ເປັນໜ້າວຽກລະອຽດ ຂອງພະແນກ ພ້ອມທັງຮັບຜິດຊອບໃນການຈັດຕັ້ງປະຕິບັດ, ເປັນເສນາທິການໃຫ້ແກ່ຄະນະກົມໃນການຕິດຕໍ່ພົວພັນ, ຮ່ວມມື ກັບບັນດາອົງການຈັດຕັ້ງຂອງລັດ, ເອກະຊົນ, ອົງການຈັດຕັ້ງສາກົນ, ຕາມການມອບໝາຍຂອງກົມ;
2. ເຂົ້າຮ່ວມຄົ້ນຄວ້າ ສ້າງ, ປັບປຸງ, ດັດແກ້ ບັນດານິຕິກາຕ່າງໆ ທີ່ ກ່ຽວກັບ ວຽກງານຄົ້ນຄວາມຖີ່ວິທະຍຸສື່ສານ;
3. ຄົ້ນຄວ້າ ແລະ ນໍາສະເໜີຂັ້ນເທິງ ກ່ຽວກັບ ການປະຕິບັດນະໂຍບາຍຕ່າງໆ, ການເລື່ອນຊັ້ນ-ຂັ້ນເງິນເດືອນ ແລະ ການປະຕິບັດລະບຽບວິໄນ ຂອງພະນັກງານ-ລັດຖະກອນພາຍໃນກົມ;

4. ຄົ້ນຄວ້າ ກຳນົດຕຳແໜ່ງງານຂອງກົມ, ຄັດເລືອກ ແລະ ພິຈາລະນາ ໃນການສະເໜີຍ້ອງຍໍພະນັກງານພາຍໃນກົມ ເພື່ອນຳສະເໜີຄະນະກົມພິຈາລະນາ;
5. ຄົ້ນຄວ້າ, ກຳນົດ ມາດຖານເງື່ອນໄຂ ແລະ ສ້າງແຜນຍົກລະດັບ, ບຳລຸງ, ກໍ່ສ້າງພະນັກງານ-ລັດຖະກອນ ພາຍໃນກົມ ເພື່ອພັດທະນາຄວາມຮູ້, ຄວາມສາມາດ ແລະ ວິຊາສະເພາະ ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ທັງພາຍໃນ ແລະ ຕ່າງປະເທດ;
6. ພົວພັນ, ຮ່ວມມື ແລະ ປະສານງານ ວຽກງານຄື້ນຄວາມຖີ່ວິທະຍຸສື່ສານພາກພື້ນດິນ ກັບບັນດາປະເທດທີ່ມີຊາຍແດນຕິດຈອດກັບ ສປປ ລາວ ແລະ ຄື້ນຄວາມຖີ່ວິທະຍຸສື່ສານພາກອາວະກາດ ທີ່ມີຄວາມຈຳເປັນຕ້ອງປະສານງານ;
7. ພົວພັນ, ຮ່ວມມື ແລະ ປະສານງານກັບ ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ກັບວຽກງານຄື້ນຄວາມຖີ່ວິທະຍຸສື່ສານ, ມາດຕະຖານເຕັກນິກ ຂອງອຸປະກອນ ຄື້ນຄວາມຖີ່ວິທະຍຸສື່ສານ ໂທລະຄົມມະນາຄົມ ແລະ ໄອຊີທີ ແລະ ວຽກງານການສື່ສານຜ່ານດາວທຽມ ຢູ່ພາຍໃນປະເທດ;
8. ປະສານງານ ກັບບັນດາອົງການຈັດຕັ້ງສາກົນເຊັ່ນ: ASEAN, ອົງການໂທລະຄົມມະນາຄົມອາຊີ-ປາຊີຟິກ (APT), ສະຫະພາບໂທລະຄົມມະນາຄົມສາກົນ (ITU), ອົງການສະຫະປະຊາຊາດດ້ານອາວະກາດ (UNOOSA), ອົງການສື່ສານອາວະກາດສາກົນອິນເຕີສະປຸດນິກ (INTERSPUTNIK IOSC) ແລະ ອົງການຈັດຕັ້ງສາກົນອື່ນໆ;
9. ເກັບກຳ, ຄຸ້ມຄອງສະຖິຕິ, ຊີວະປະຫວັດພະນັກງານ ແລະ ການປະເມີນຜົນງານ ກ່ຽວກັບ ວຽກງານ ພະນັກງານ-ລັດຖະກອນ ຂອງກົມ;
10. ເກັບກຳ, ເກັບມ້ຽນ, ຮຽບຮຽງ, ຄຸ້ມຄອງ, ຮັກສາບັນດາເອກະສານວຽກງານຂາເຂົ້າ-ຂາອອກ, ກວດກາຄວາມຖືກຕ້ອງຂອງເອກະສານ ກ່ອນຈະນຳສະເໜີຄະນະກົມ ມີຄຳເຫັນ ເພື່ອສົ່ງອອກໄປຫາໜ່ວຍງານອື່ນໆທີ່ກ່ຽວຂ້ອງ;
11. ເກັບກຳ, ເກັບມ້ຽນ, ຮັກສາຕາປະທັບ, ກາຊື່ຂອງຄະນະກົມ ແລະ ການນຳໃຊ້ຕາປະທັບພາຍໃນກົມ ໃຫ້ຖືກຕ້ອງຕາມລະບຽບການ, ພ້ອມທັງຮັກສາຄວາມລັບທາງລັດຖະການ;
12. ສະເໜີແຜນ ຄຸ້ມຄອງ, ບຳລຸງຮັກສາ, ຂຶ້ນບັນຊີ, ຕິດຕາມກວດກາ ເຄື່ອງມື, ອຸປະກອນເຕັກນິກ, ພາຫະນະຮັບໃຊ້, ຊັບສົມບັດ ແລະ ຊັບສິນ ສ່ວນລວມທັງໝົດ ທີ່ຢູ່ໃນຄວາມຮັບຜິດຊອບຂອງກົມ;
13. ສັງລວມ ແລະ ສະເໜີແຜນງົບປະມານຮັບໃຊ້ປະຈຳປີ, ແຜນງົບປະມານໃນການເຄື່ອນໄຫວວຽກງານ ຂອງກົມ ພ້ອມທັງສະຫຼຸບລາຍງານຂັ້ນເທິງ;
14. ຄຸ້ມຄອງ ແລະ ນຳໃຊ້ງົບປະມານ-ການເງິນ, ລົງບັນຊີລາຍຮັບ-ລາຍຈ່າຍ, ວັດຖຸຊັບສິນ ຕາມກົດໝາຍ ແລະ ລະບຽບການ;
15. ປະສານສົມທົບ ກັບບັນດາພະແນກ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຂຶ້ນແຜນງົບປະມານລາຍຮັບ-ລາຍຈ່າຍ ປະຈຳປີ ຂອງກົມ;
16. ສ້າງແຜນດັດແກ້ ຫົກເດືອນຕົ້ນປີ ແລະ ຫົກເດືອນທ້າຍປີ ງົບປະມານຂອງກົມ;
17. ປະສານສົມທົບ ແລະ ໃຫ້ການຮ່ວມມື ກັບ ຄະນະກວດສອບ ສູນໂມງ, ກົມແຜນການ ແລະ ການເງິນ ຂອງກະຊວງ ແລະ ຄະນະກວດສອບແຫ່ງລັດ;
18. ສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ໃນການຂຶ້ນແຜນ ຈັດຊື້ວັດຖຸອຸປະກອນວິຊາສະເພາະຂອງກົມ ໃນແຕ່ລະໄລຍະ;
19. ສ້າງແຜນ, ຕິດຕາມ ກວດກາ ແລະ ສະຫຼຸບລາຍຮັບ ຄ່າທຳນຽມ ແລະ ຄ່າບໍລິການ ວິຊາການດ້ານຄື້ນຄວາມຖີ່ວິທະຍຸສື່ສານ ແລະ ຄ່າກວດກາ, ຢັ້ງຢືນມາດຕະຖານເຕັກນິກຂອງອຸປະກອນໂທລະຄົມມະນາຄົມ ປະຈຳເດືອນ, ປະຈຳງວດ, ປະຈຳ 6 ເດືອນ ແລະ ປະຈຳປີ;

20. ປະສານສົມທົບກັບ ກົມແຜນການ ແລະ ການເງິນ ກ່ຽວກັບ ການສະຫຼຸບລາຍຮັບ ຄ່າທຳນຽມ, ຄ່າບໍລິການ ດ້ານຄື້ນຄວາມຖີ່ວິທະຍຸສື່ສານ, ການສື່ສານຜ່ານດາວທຽມ ແລະ ຕຳແໜ່ງວົງໂຄຈອນດາວທຽມ ແລະ ການຈັດເກັບລາຍຮັບ ຄ່າທຳນຽມ, ຄ່າບໍລິການ ດ້ານການກວດກາ ແລະ ຢັ້ງຢືນມາດຕະຖານເຕັກນິກຂອງອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ ໂທລະຄົມມະນາຄົມ ແລະ ໄອຊີທີ, ການຕອບຮັບການແຈ້ງຄວາມສອດຄ່ອງ ແລະ ກາໝາຍມາດຕະຖານເຕັກນິກ;
21. ສະຫຼຸບ ຕີລາຄາ ຕິດຕາມ ກວດກາ ປະເມີນຜົນ ແລະ ຖອດຖອນບົດຮຽນ ການຈັດຕັ້ງປະຕິບັດ ວຽກງານຂອງບັນດາພະແນກ, ກົມ ກ່ຽວກັບ ການເຄື່ອນໄຫວວຽກງານ ເປັນແຕ່ລະໄລຍະ ແລະ ໃຫ້ແທດເໝາະ ກັບທິດທາງ ແລະ ແຜນການລວມຂອງກົມວາງອອກ;
22. ສະຫຼຸບ, ສັງລວມ ລາຍງານການເຄື່ອນໄຫວການຈັດຕັ້ງປະຕິບັດ ແຜນການປະຈຳອາທິດ, ປະຈຳເດືອນ, ປະຈຳງວດ ແລະ ປະຈຳປີ ຂອງກົມ;
23. ກະກຽມກອງປະຊຸມຕ່າງໆ, ວຽກງານພິທີການ ແລະ ເຮັດບົດບັນທຶກກອງປະຊຸມຂອງກົມ;
24. ປະຕິບັດໜ້າທີ່ອື່ນໆຕາມການຕົກລົງ ແລະ ມອບໝາຍຂອງຄະນະກົມ.

**ມາດຕາ 8 ໜ້າທີ່ຂອງພະແນກຈັດສັນ ແລະ ອະນຸຍາດຄື້ນຄວາມຖີ່ວິທະຍຸສື່ສານ**

ພະແນກຈັດສັນ ແລະ ອະນຸຍາດຄື້ນຄວາມຖີ່ວິທະຍຸສື່ສານ, ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າການ ອອກ, ຕໍ່ອາຍຸ, ໂຈະ ຫຼື ຖອນ ໃບອະນຸຍາດການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ເພື່ອໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການ;
2. ຄົ້ນຄ້ວາ ຜັນຂະຫຍາຍແຜນນະໂຍບາຍ, ແຜນຍຸດທະສາດ, ແຜນຜັງແຫ່ງຊາດ ກ່ຽວກັບ ຄື້ນຄວາມຖີ່ວິທະຍຸສື່ສານ;
3. ຄົ້ນຄວ້າ, ປັບປຸງການຈັດສັນ ແລະ ຈັດແບ່ງການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ, ສອດຄ່ອງກັບກົດໝາຍ, ລະບຽບການ, ສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ;
4. ຄົ້ນຄວ້າ ການຮັບຮອງ ແຜນຈັດສັນຄື້ນຄວາມຖີ່ວິທະຍຸສື່ສານ ສຳລັບເຕັກໂນໂລຊີຕ່າງໆ, ໃຫ້ສອດຄ່ອງກັບແຕ່ລະໄລຍະ;
5. ຄົ້ນຄວ້າ, ສ້າງ ແລະ ປັບປຸງ ອັດຕາຄ່າທຳນຽມ ແລະ ຄ່າບໍລິການວິຊາການດ້ານ ຄື້ນຄວາມຖີ່ວິທະຍຸສື່ສານ ໃຫ້ສອດຄ່ອງກັບສະພາບການ ຂະຫຍາຍຕົວຂອງເສດຖະກິດສັງຄົມໃນແຕ່ລະໄລຍະ;
6. ຄົ້ນຄວ້າ ສ້າງ, ປັບປຸງ, ດັດແກ້ ບັນດານິຕິກຳຕ່າງໆທີ່ກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ;
7. ຄົ້ນຄວ້າ ອອກໃບສັ່ງມອບຄ່າທຳນຽມ, ຄ່າບໍລິການ ວິຊາການດ້ານຄື້ນຄວາມຖີ່ວິທະຍຸສື່ສານ;
8. ຄົ້ນຄວ້າ ແລະ ກຳນົດເງື່ອນໄຂ ການນຳໃຊ້ຄື້ນຄວາມຖີ່ ໃຫ້ສອດຄ່ອງກັບລະບຽບກົດໝາຍ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;
9. ຂຶ້ນທະບຽນການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານຢູ່ ສປປ ລາວ ໂດຍການນຳໃຊ້ໂປຣແກຣມຄຸ້ມຄອງຄື້ນຄວາມຖີ່ວິທະຍຸສື່ສານ;
10. ຄົ້ນຄວ້າ ແລະ ປະກອບຄຳເຫັນຕໍ່ກັບການຂຶ້ນທະບຽນຄື້ນຄວາມຖີ່ວິທະຍຸສື່ສານ ຂອງ ຕ່າງປະເທດ ຜ່ານລະບົບ BRIFIC ຂອງ ITU ທີ່ອາດສົ່ງຜົນກະທົບ ຕໍ່ສະຖານີຄື້ນຄວາມຖີ່ວິທະຍຸສື່ສານ ຂອງ ສປປ ລາວ;
11. ຂຶ້ນທະບຽນການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານພາກພື້ນດິນກັບສະຫະພາບໂທລະຄົມມະນາຄົມສາກົນ (ITU) ໂດຍຜ່ານລະບົບ WISFAT ແລະ ອົງການໂທລະຄົມມະນາຄົມ ອາຊີ-ປາຊີຟິກ (APT) ຜ່ານລະບົບ AFIS;
12. ຕິດຕາມ, ພົວພັນ ແລະ ເກັບກຳຂໍ້ມູນທາງດ້ານເຕັກນິກກ່ຽວກັບການນຳໃຊ້ຄື້ນຄວາມຖີ່ຂອງບັນດາພາກສ່ວນໃນປະເທດ ເຊັ່ນ: ບໍລິສັດ ຜູ້ໃຫ້ບໍລິການດ້ານໂທລະຄົມມະນາຄົມ, ກະຊວງ ປກຊ, ກະຊວງ ປກສ, ສະຖານີໂທລະພາບ, ສະຖານີວິທະຍຸກະຈາຍສຽງ ແລະ ອື່ນໆ;

13. ຄົ້ນຄວ້າ ແລະ ກຳນົດ ລະບຽບການ ໃນການປະມູນຄື້ນຄວາມຖີ່ວິທະຍຸສື່ສານ;
14. ຄົ້ນຄວ້າ, ເຈລະຈາ ບັນຫາການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ກັບບັນດາປະເທດທີ່ມີຊາຍແດນຕິດຈອດກັບ ສປປ ລາວ;
15. ເຂົ້າຮ່ວມກອງປະຊຸມຕ່າງໆດ້ານວິຊາການ ຢູ່ພາຍໃນ ແລະ ຕ່າງປະເທດເຊັ່ນ: ກອງປະຊຸມຂອງ ASEAN, ອົງການໂທລະຄົມມະນາຄົມອາຊີ-ປາຊີຟິກ (APT), ສະຫະພາບໂທລະຄົມມະນາຄົມສາກົນ (ITU) ແລະ ອົງການຈັດຕັ້ງສາກົນອື່ນ ກ່ຽວກັບການຄຸ້ມຄອງຄື້ນຄວາມຖີ່ວິທະຍຸສື່ສານ ເຊັ່ນ: ກອງປະຊຸມ SSM, AWG, APG, Study Group, CPM, WRC ແລະ ອື່ນໆ;
16. ໂຄສະນາ, ເຜີຍແຜ່ນິຕິກຳ ແລະ ຝຶກອົບຮົມທາງດ້ານວິຊາການ ເຕັກໂນໂລຊີໃໝ່ໆ ທີ່ກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ;
17. ເກັບກຳ ສະຖິຕິການອອກອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຂອງບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງຕ່າງໆ ໃນຂອບເຂດທົ່ວປະເທດ ແລະ ປັບປຸງຖານຂໍ້ມູນການອອກອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ແລະ ສະໜອງຂໍ້ມູນໃຫ້ກັບພະແນກທີ່ກ່ຽວຂ້ອງ;
18. ສະຫຼຸບການເຄື່ອນໄຫວວຽກງານ ປະຈຳອາທິດ, ເດືອນ, ງວດ ແລະ ປີ ຂອງພະແນກ;
19. ປະຕິບັດໜ້າທີ່ ແລະ ສິດ ອື່ນໆ ຕາມການມອບໝາຍ ຂອງ ຄະນະກົມ.

**ມາດຕາ 9 ໜ້າທີ່ຂອງພະແນກ ກວດກາ ແລະ ແກ້ໄຂ ຄື້ນຄວາມຖີ່ວິທະຍຸສື່ສານ**

ພະແນກ ກວດກາ ແລະ ແກ້ໄຂ ຄື້ນຄວາມຖີ່ວິທະຍຸສື່ສານ, ມີໜ້າທີ່ດັ່ງນີ້:

1. ຕິດຕາມ, ກວດກາ ການນຳໃຊ້ຄື້ນວິທະຍຸສື່ສານ ຢູ່ ສະຖານີກວດກາຄື້ນຄວາມຖີ່ວິທະຍຸສື່ສານຄົງທີ່;
2. ຕິດຕາມ, ກວດກາ ການນາໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ແລະ ອຸປະກອນທີ່ນາໃຊ້ໃນປະເພດການສື່ສານວິທະຍຸກະຈາຍສຽງ-ໂທລະພາບ, ໂທລະຄົມມະນາຄົມ ແລະ ປະເພດວິທະຍຸສື່ສານ ອື່ນໆ;
3. ຕິດຕາມ, ກວດກາ ຄື້ນຄວາມຖີ່ວິທະຍຸສື່ສານ ຂອງຕ່າງປະເທດ ທີ່ແຜ່ກະຈາຍລ່ວງລ້ຳເຂົ້າມາໃນດິນແດນຂອງ ສປປ ລາວ;
4. ຕິດຕາມ, ກວດກາ ຊອກຫາການລັກລອບນາໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ, ຄື້ນສັນຍານລົບກວນ ໃນຂອບເຂດທົ່ວປະເທດ;
5. ຕິດຕາມ, ກວດກາ ຄື້ນຄວາມຖີ່ວິທະຍຸສື່ສານ ຂອງເຄື່ອງບິນບໍ່ມີຄົນຂັບ (Drone) ຕາມການອະນຸຍາດ;
6. ຕິດຕາມ, ກວດກາ ແລະ ແກ້ໄຂ ບັນຫາຄື້ນຄວາມຖີ່ລົບກວນ ຕາມການສະເໜີ ຂອງບັນດາບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ;
7. ຕິດຕາມ, ກວດກາ ການນາໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ແລະ ລະດັບຄວາມແຮງ ຂອງສັນຍານໂທລະສັບເຄື່ອນທີ່, ວິທະຍຸກະຈາຍສຽງ-ໂທລະພາບ ຕາມການຕົກລົງ ຂອງກອງປະຊຸມ ປະສານງານຄື້ນຄວາມຖີ່ວິທະຍຸສື່ສານ ລຽບຕາມຊາຍແດນ ຢ່າງເປັນປົກກະຕິ;
8. ຮັບໃຊ້ກອງປະຊຸມລະດັບຊາດ ໃນການກວດກາ, ແກ້ໄຂ, ຮັບປະກັນຄວາມແຮງ ຂອງ ສັນຍານຄື້ນຄວາມຖີ່ວິທະຍຸສື່ສານ;
9. ຄົ້ນຄ້ວາ ແລະ ແກ້ໄຂບັນຫາຄື້ນຄວາມຖີ່ວິທະຍຸສື່ສານລົບກວນ ໃຫ້ສອດຄ່ອງກັບ ເງື່ອນໄຂ ທີ່ໄດ້ກຳນົດໃນ ລະບຽບການຄື້ນຄວາມຖີ່ສາກົນ ITU-R Radio Regulation, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;
10. ຈັດຕັ້ງປະຕິບັດມາດຕະການ ສຶກສາອົບຮົມ ແລະ ມາດຕະການອື່ນ ທີ່ໄດ້ກຳນົດໃນກົດໝາຍ ແລະ ລະບຽບການ ຕໍ່ຜູ້ລະເມີດ ໃນການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ;

11. ຕິດຕາມ, ກວດກາ ແລະ ແກ້ໄຂ ການລັກລອບນໍາໃຊ້ສັນຍານໂທລະຄົມມະນາຄົມ ແລະ ອິນເຕີເນັດ ຈາກຕ່າງປະເທດ ໃນ ສປປ ລາວ;
12. ກວດກາການນໍາໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ໃນຂອບເຂດທົ່ວປະເທດ ຕາມແຜນປະຈໍາປີ;
13. ກວດກາ ວັດແທກ ສະຖານີຄື້ນຄວາມຖີ່ວິທະຍຸສື່ສານ ເຊັ່ນ: ວິທະຍຸກະຈາຍສຽງ-ໂທລະພາບ, ໂທລະຄົມມະນາຄົມ ແລະ ປະເພດວິທະຍຸສື່ສານອື່ນໆ ເພື່ອຮັບປະກັນຄວາມຖືກຕ້ອງ ກ່ອນ ແລະ ຫຼັງ ການອະນຸຍາດ;
14. ສະໜອງຂໍ້ມູນຜົນການກວດກາ ແລະ ວັດແທກ ເພື່ອຮັບໃຊ້ໃຫ້ແກ່ ການຈັດສັນ ແລະ ອະນຸຍາດຄື້ນຄວາມຖີ່ວິທະຍຸສື່ສານ;
15. ຄົ້ນຄ້ວາ ແຜນໂຄງການກໍ່ສ້າງ, ຂະຫຍາຍ, ສ້ອມແປງ ລະບົບຕາໜ່າງເຄືອຂ່າຍສະຖານີກວດກາຄື້ນຄວາມຖີ່ວິທະຍຸສື່ສານ ແລະ ອຸປະກອນກວດກາຄື້ນຄວາມຖີ່ວິທະຍຸສື່ສານ ໃນຂອບເຂດທົ່ວປະເທດ;
16. ກໍານົດ ແລະ ສ້າງແຜນລົງກວດກາຄື້ນຄວາມຖີ່ວິທະຍຸສື່ສານ ປະຈໍາເດືອນ, ສາມເດືອນ, ຫົກເດືອນ,ໜຶ່ງປີ ແລະ ແຜນຮີບດ່ວນ;
17. ຄຸ້ມຄອງການນໍາໃຊ້, ບາລຸງຮັກສາ ອຸປະກອນ ແລະ ພາຫະນະ ຮັບໃຊ້ວຽກງານກວດກາຄື້ນຄວາມຖີ່ວິທະຍຸສື່ສານ;
18. ເຂົ້າຮ່ວມກອງປະຊຸມຕ່າງໆ ດ້ານວິຊາການ ຢູ່ພາຍໃນ ແລະ ຕ່າງປະເທດ;
19. ເຂົ້າຮ່ວມຄົ້ນຄ້ວາ ສ້າງ, ປັບປຸງ ແລະ ດັດແກ້ ບັນດານິຕິກາຕ່າງໆ ກ່ຽວກັບ ວຽກງານຄື້ນຄວາມຖີ່ວິທະຍຸສື່ສານ;
20. ສະຫຼຸບການເຄື່ອນໄຫວວຽກງານຂອງພະແນກ ປະຈໍາອາທິດ, ເດືອນ, ຫົກເດືອນ ແລະ ປີ;
21. ປະຕິບັດໜ້າທີ່ ແລະ ສິດ ອື່ນໆຕາມການມອບໝາຍ ຂອງຄະນະກົມ.

**ມາດຕາ 10 ໜ້າທີ່ຂອງພະແນກ ຄຸ້ມຄອງການສື່ສານຜ່ານດາວທຽມ**

ພະແນກ ຄຸ້ມຄອງການສື່ສານຜ່ານດາວທຽມ, ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ, ສ້າງ, ປັບປຸງ, ດັດແກ້, ຜັນຂະຫຍາຍ ບັນດານິຕິກໍາ ແລະ ນະໂຍບາຍທີ່ກ່ຽວກັບການສື່ສານຜ່ານດາວທຽມ;
2. ເຂົ້າຮ່ວມ, ຄົ້ນຄວ້າ, ສ້າງ, ປັບປຸງ, ດັດແກ້ ບັນດານິຕິກໍາ ກ່ຽວກັບ ຄື້ນຄວາມຖີ່ວິທະຍຸສື່ສານ;
3. ຄົ້ນຄວ້າ, ສັງລວມ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລັດຖະບັນຍັດ ແລະ ດໍາລັດ ກ່ຽວກັບການສື່ສານຜ່ານດາວທຽມ ເພື່ອຜັນຂະຫຍາຍເປັນແຜນການ, ແຜນງານ, ໂຄງການ ແລະ ລະບຽບການ ໃນການຈັດຕັ້ງປະຕິບັດ;
4. ຄົ້ນຄວ້າ, ສັງລວມ ລະບຽບການວິທະຍຸສື່ສານສາກົນ (ສໍາລັບພາກອາວະກາດ), ກົດໝາຍອາວະກາດສາກົນ ມາເປັນແຜນການ, ແຜນງານ ແລະ ລະບຽບການ ໃນການຄຸ້ມຄອງການສື່ສານຜ່ານດາວທຽມ ໃນແຕ່ລະໄລຍະ;
5. ຄົ້ນຄວ້າ ແລະ ສະເໜີປັບປຸງນິຕິກໍາ ກ່ຽວກັບ ອັດຕາຄ່າທໍານຽມ ແລະ ຄ່າບໍລິການ ວິຊາການດ້ານການສື່ສານຜ່ານດາວທຽມໃຫ້ສອດຄ່ອງກັບ ເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;
6. ແຈ້ງຂຶ້ນທະບຽນຄື້ນຄວາມຖີ່ວິທະຍຸສື່ສານຜ່ານດາວທຽມ, ດາວທຽມ, ສະຖານີດາວທຽມພາກພື້ນດິນ ແລະ ຂໍຈອງຕໍາແໜ່ງວົງໂຄຈອນດາວທຽມ ນໍາສະຫະພາບໂທລະຄົມມະນາຄົມສາກົນ;
7. ຄົ້ນຄວ້າ ແລະ ປະສານງານຄື້ນຄວາມຖີ່ວິທະຍຸສື່ສານຜ່ານດາວທຽມ, ຕໍາແໜ່ງວົງໂຄຈອນດາວທຽມ, ສະຖານີດາວທຽມພາກພື້ນດິນ, Landing Rights ແລະ ເຕັກນິກການສື່ສານຜ່ານດາວທຽມ ທັງພາຍໃນ, ຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ;

8. ຄົ້ນຄວ້າ ແລະ ອະນຸຍາດ ສິດໃນການໃຫ້ບໍລິການສື່ສານຜ່ານດາວທຽມ ສໍາລັບດາວທຽມຕ່າງປະເທດ (Landing Rights) ທີ່ມີຈຸດປະສົງຈະເຂົ້າມາໃຫ້ບໍລິການ ຢູ່ ສປປ ລາວ;
9. ຄຸ້ມຄອງ, ຕິດຕາມ, ກວດກາ ການດໍາເນີນກິດຈະການ ໃນດ້ານການໃຫ້ບໍລິການສື່ສານຜ່ານດາວທຽມ;
10. ຄົ້ນຄວ້າ, ອອກ, ຕໍ່ ຫຼື ຖອນ ໃບອະນຸຍາດ ການດໍາເນີນກິດຈະການດ້ານການສື່ສານຜ່ານດາວທຽມ;
11. ຄົ້ນຄວ້າ, ອອກ, ຕໍ່ ຫຼື ຖອນ ໃບອະນຸຍາດ ໃນການສ້າງຕັ້ງ ຫຼື ການນໍາໃຊ້ສະຖານີດາວທຽມພາກພື້ນດິນ;
12. ຊຸກຍູ້ ແລະ ສົ່ງເສີມ ການນໍາໃຊ້ການສື່ສານຜ່ານດາວທຽມ ດ້ວຍຫຼາຍຮູບແບບ ທີ່ນໍາໃຊ້ເຕັກໂນໂລຊີໃໝ່ ແລະ ກ້າວໜ້າ ເພື່ອໃຫ້ເກີດປະໂຫຍດສູງສຸດຕໍ່ສັງຄົມ ແລະ ປະເທດຊາດ;
13. ສ້າງແຜນການຮ່ວມມືກັບບັນດາບັນດາປະເທດ ແລະ ອົງການອາວະກາດຕ່າງໆ ເພື່ອຖອດຖອນ, ແລກປ່ຽນ ຄວາມຮູ້, ພັດທະນາບຸກຄະລາກອນ;
14. ຄົ້ນຄວ້າ ແລະ ອະນຸຍາດ ການນໍາເຂົ້າ-ສົ່ງອອກ, ຈໍາໜ່າຍ, ຕິດຕັ້ງ, ສ້ອມແປງ ແລະ ການຜະລິດ ອຸປະກອນ ສື່ສານຜ່ານດາວທຽມ;
15. ຄົ້ນຄວ້າ ແລະ ອະນຸຍາດ ການຂຶ້ນທະບຽນດາວທຽມເປັນວັດຖຸອາວະກາດ, ການຂຶ້ນທະບຽນຕໍາແໜ່ງວົງໂຄຈອນດາວທຽມ, ດາວທຽມ ແລະ ສະຖານີດາວທຽມພາກພື້ນດິນ ນໍາອົງການຈັດຕັ້ງສາກົນ;
16. ຄົ້ນຄວ້າ ອອກໃບສັ່ງມອບ ຄ່າທໍານຽມ, ຄ່າບໍລິການວິຊາການ ດ້ານການສື່ສານຜ່ານດາວທຽມ;
17. ຮັບຄໍາຮ້ອງທຸກ ແລະ ແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບ ວຽກງານການສື່ສານຜ່ານດາວທຽມ;
18. ປະສານສົມທົບ ກັບບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດວຽກງານຄຸ້ມຄອງການສື່ສານຜ່ານດາວທຽມ;
19. ພົວພັນ ແລະ ຮ່ວມມືກັບສາກົນ ໃນວຽກງານການສື່ສານຜ່ານດາວທຽມ ຕາມຂອບເຂດຄວາມຮັບຜິດຊອບ ແລະ ການມອບໝາຍຂອງຂັ້ນເທິງ;
20. ເຂົ້າຮ່ວມ ແລະ ຈັດກອງປະຊຸມຕ່າງໆ ດ້ານວິຊາການ ການສື່ສານຜ່ານດາວທຽມ ທັງພາຍໃນ ແລະ ຕ່າງປະເທດ;
21. ຂຶ້ນແຜນ, ສະຫຼຸບການເຄື່ອນໄຫວວຽກງານຂອງພະແນກ ປະຈໍາທິດ, ເດືອນ, ງວດ ແລະ ປີ;
22. ປະຕິບັດໜ້າທີ່ ແລະ ສິດອື່ນ ຕາມການມອບໝາຍຂອງ ຄະນະກົມ.

**ມາດຕາ 11 ໜ້າທີ່ຂອງພະແນກ ມາດຕະຖານເຕັກນິກອຸປະກອນ ຄື້ນຄວາມຖີ່, ໂທລະຄົມມະນາຄົມ ແລະ ໄອຊີທີ**

ພະແນກ ມາດຕະຖານເຕັກນິກອຸປະກອນ ຄື້ນຄວາມຖີ່, ໂທລະຄົມມະນາຄົມ ແລະ ໄອຊີທີ, ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ, ກວດກາ ມາດຕະຖານເຕັກນິກຂອງອຸປະກອນໂທລະຄົມມະນາຄົມ ກ່ຽວກັບ ການກະຈາຍຄື້ນຄວາມຖີ່ (Radio Frequency - RF), ສະໜາມໄຟຟ້າແມ່ເຫຼັກ (Electromagnetic Field - EMF), ຄວາມເຂົ້າກັນໄດ້ທາງໄຟຟ້າແມ່ເຫຼັກ (Electromagnetic Compatibility - EMC), ຄວາມປອດໄພຕໍ່ຮ່າງກາຍມະນຸດກ່ຽວກັບອັດຕາດູດກືນພະລັງງານສະເພາະ (Specific Absorption Rate – SAR), RoHS, Radio and Signaling, Electric Safety, ມາດຕະຖານການເຊື່ອມຕໍ່, ມາດຕະຖານຂີ້ເຫຍື້ອເອເລັກໂຕຣນິກ ແລະ ອຸປະກອນໄຟຟ້າ (Waste Electrical and Electronic Equipment Weee) ແລະ ອື່ນໆ;
2. ຄົ້ນຄວ້າ ອອກ, ຕໍ່, ໂຈະ, ຖອນ ໃບຢັ້ງຢືນມາດຕະຖານເຕັກນິກ ຂອງອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ, ໂທລະຄົມມະນາຄົມ ແລະ ໄອຊີທີ ຕາມລະບຽບການກ່ຽວກັບມາດຕະຖານເຕັກນິກຂອງ ສາກົນ ແລະ ສປປ ລາວ ກໍານົດ;
3. ຄົ້ນຄວ້າ ສະເໜີຄະນະກົມ ເພື່ອ ອອກ, ຕໍ່, ໂຈະ, ຖອນ ໃບຕອບຮັບການແຈ້ງຄວາມສອດຄ່ອງມາດຕະຖານເຕັກນິກ;

4. ຄົ້ນຄວ້າ ສະເໜີຄະນະກົມ ເພື່ອສ້າງ, ປັບປຸງ ມາດຕະຖານແຫ່ງຊາດ, ລະບຽບ ແລະ ບົດແນະນຳ ກ່ຽວກັບມາດຕະຖານເຕັກນິກ ຂອງອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ, ໂທລະຄົມມະນາຄົມ ແລະ ໄອຊີທີ ໃຫ້ສອດຄ່ອງກັບກົດໝາຍ, ລະບຽບການ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງກັບ ສປປ ລາວ;
5. ຄົ້ນຄວ້າ ສະເໜີຄະນະກົມ ເພື່ອສ້າງ ແລະ ປັບປຸງ ນິຕິກຳ ກ່ຽວກັບການຄຸ້ມຄອງວຽກງານ ກວດກາ, ຢັ້ງຢືນ ແລະ ຕອບຮັບການແຈ້ງຄວາມສອດຄ່ອງ ມາດຕະຖານເຕັກນິກ ຂອງອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ, ໂທລະຄົມມະນາຄົມ ແລະ ໄອຊີທີ;
6. ຄົ້ນຄວ້າ ຈັດຕັ້ງປະຕິບັດ ລະບຽບການຂອງອົງການສາກົນ, ສົນທິສັນຍາ ແລະ ສັນຍາສາກົນທີ່ກ່ຽວຂ້ອງກ່ຽວກັບ ມາດຕະຖານເຕັກນິກ ຂອງອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ, ໂທລະຄົມມະນາຄົມ ແລະ ໄອຊີທີ;
7. ຄົ້ນຄວ້າ ສຶກສາ ແລະ ຈັດຕັ້ງປະຕິບັດ ການຮ່ວມມືໃນວຽກງານ Mutual Recognition Agreement (MRA) ກັບຕ່າງປະເທດ ແລະ ອົງການສາກົນ;
8. ຄົ້ນຄ້ວາສະເໜີຄະນະກົມ ໃນການປະສານງານ, ກຳນົດ (Designation) ແລະ ຮັບຮອງ (recognize) ຫ້ອງກວດກາມາດຕະຖານເຕັກນິກ ພາຍໃນປະເທດ ແລະ ຕ່າງປະເທດ, ພ້ອມທັງ ຕິດຕາມຄວາມສອດຄ່ອງທາງດ້ານລະບຽບການ ແລະ ມາດຕະຖານເຕັກນິກຂອງຫ້ອງກວດກາມາດຕະຖານດັ່ງກ່າວ;
9. ຄົ້ນຄວ້າ ແລະ ສະເໜີຄະນະກົມ ໃນການປັບປຸງນິຕິກຳອັດຕາຄ່າທຳນຽມ ແລະ ຄ່າບໍລິການ ການກວດກາ, ຢັ້ງຢືນ ແລະ ຕອບຮັບການແຈ້ງຄວາມສອດຄ່ອງ ມາດຕະຖານເຕັກນິກ ແລະ ກາໝາຍຢັ້ງຢືນທາງດ້ານເຕັກນິກ ໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດສັງຄົມໃນແຕ່ລະໄລຍະ;
10. ຄົ້ນຄວ້າສະເໜີຄະນະກົມ ໃນການອອກໃບສັ່ງມອບຄ່າທຳນຽມ, ຄ່າບໍລິການວິຊາການ ກ່ຽວກັບການກວດກາ, ຢັ້ງຢືນ ແລະ ໃບຕອບຮັບການແຈ້ງຄວາມສອດຄ່ອງ ມາດຕະຖານເຕັກນິກຂອງອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ, ໂທລະຄົມມະນາຄົມ ແລະ ໄອຊີທີ, ການນຳເຂົ້າອຸປະກອນ ແລະ ກາໝາຍຢັ້ງຢືນທາງດ້ານເຕັກນິກ;
11. ກວດກາ ແລະ ຢັ້ງຢືນມາດຕະຖານເຕັກນິກຄວາມປອດໄພ ຂອງຄວາມແຮງທົ່ງແມ່ເຫຼັກໄຟຟ້າ ຂອງສະຖານີຮັບ-ສົ່ງ ສັນຍານໂທລະສັບເຄື່ອນທີ່, ສະຖານີວິທະຍຸກະຈາຍສຽງ-ໂທລະພາບ ຕາມກົດໝາຍ ແລະ ລະບຽບການ;
12. ຄົ້ນຄວ້າສະເໜີຄະນະກົມ ເພື່ອສະໜອງ, ຕິດຕາມ, ກວດກາ ການນຳໃຊ້ກາໝາຍຢັ້ງຢືນທາງດ້ານເຕັກນິກໃຫ້ກັບອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ, ໂທລະຄົມມະນາຄົມ ແລະ ໄອຊີທີ ທີ່ໄດ້ຮັບການກວດກາ, ຢັ້ງຢືນ ແລະ ຕອບຮັບການແຈ້ງຄວາມສອດຄ່ອງ ມາດຕະຖານເຕັກນິກ;
13. ຄົ້ນຄວ້າສະເໜີຄະນະກົມ ເພື່ອອະນຸຍາດ, ກວດກາ ການນຳເຂົ້າອຸປະກອນທີ່ໄດ້ຜ່ານການຢັ້ງຢືນ ແລະ ແຈ້ງຄວາມສອດຄ່ອງ ມາດຕະຖານເຕັກນິກ ຂອງອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ, ໂທລະຄົມມະນາຄົມ ແລະ ໄອຊີທີ;
14. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຕິດຕາມ, ກວດກາ ອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ, ໂທລະຄົມມະນາຄົມ ແລະ ໄອຊີທີ ແບບປົກກະຕິ, ແບບແຈ້ງໃຫ້ຮູ້ລ່ວງໜ້າ ແລະ ແບບກະທັນຫັນ ຫຼັງຈາກໄດ້ຮັບການຢັ້ງຢືນ ແລະ ຕອບຮັບການແຈ້ງຄວາມສອດຄ່ອງ ມາດຕະຖານເຕັກນິກ ພ້ອມທັງໃຊ້ມາດຕະການ ສຶກສາອົບຮົມ, ອາຍັດ, ປັບໃໝ ໃນກໍລະນີບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ;
15. ເກັບກຳ, ສະຫຼຸບ ແລະ ລາຍງານຂໍ້ມູນສະຖິຕິ ປະຈຳເດືອນ, ງວດ, ຫົກເດືອນ ແລະ ປີ ກ່ຽວກັບການກວດກາ ແລະ ຢັ້ງຢືນມາດຕະຖານເຕັກນິກ ຂອງອຸປະກອນຄື້ນຄວາມຖີ່ວິທະຍຸສື່ສານ, ໂທລະຄົມມະນາຄົມ ແລະ ໄອຊີທີ ເຊັ່ນ: ປະເພດ, ຍີ່ຫໍ້, ລຸ້ນ, ຈຳນວນ, ລະຫັດປະຈຳເຄື່ອງ, ຜູ້ຜະລິດ, ຜູ້ນຳເຂົ້າ, ມາດຕະຖານ ທີ່ໄດ້ຮັບການຢັ້ງຢືນ ແລະ ອື່ນໆ;

16. ເຂົ້າຮ່ວມກອງປະຊຸມສາກົນ ກ່ຽວກັບ ວຽກງານກວດກາ, ຢັ້ງຢືນ ແລະ ຕອບຮັບແຈ້ງການຄວາມສອດຄ່ອງມາດຕະຖານເຕັກນິກຂອງອຸປະກອນຄົ້ນຄວາມຖີ່ວິທະຍຸສື່ສານ, ໂທລະຄົມມະນາຄົມ ແລະ ໄອຊີທີ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍ ເຊັ່ນ: ກອງປະຊຸມໂລກກ່ຽວກັບມາດຕະຖານໂທລະຄົມມະນາຄົມ (WTSA), ກອງປະຊຸມກະກຽມຂອງ APT ຕໍ່ກັບ WTSA (APT WTSA), ກອງປະຊຸມມາດຕະຖານໂທລະຄົມມະນາຄົມເອເຊຍ-ປາຊີຟິກ (ASTAP), ກອງປະຊຸມລະຫວ່າງປະເທດລຽບຕາມຊາຍແດນ ແລະ ກອງປະຊຸມອື່ນໆ;
17. ໂຄສະນາ, ເຜີຍແຜ່ນິຕິກຳ, ມາດຕະຖານແຫ່ງຊາດ, ລະບຽບການເຕັກນິກ, ບົດແນະນຳ ແລະ ຝຶກອົບຮົມທາງດ້ານວິຊາການ, ມາດຕະຖານເຕັກໂນໂລຊີໃໝ່ໆ ໃຫ້ກັບພາກສ່ວນທີ່ກ່ຽວຂ້ອງ;
18. ຄຸ້ມຄອງ, ນຳໃຊ້, ຂຶ້ນແຜນ ບຳລຸງຮັກສາ ບັນດາອຸປະກອນ ກວດກາ ມາດຕະຖານເຕັກນິກຂອງອຸປະກອນ ໂທລະຄົມມະນາຄົມ;
19. ຂຶ້ນແຜນ ການກຳນົດຈຸດ ແລະ ລົງກວດກາ ຄວາມແຮງຂອງສັນຍານ ທົ່ງແມ່ເຫຼັກໄຟຟ້າ (EMF) ຂອງເສົາສັນຍານໂທລະສັບມືຖື ປະຈຳອາທິດ, ເດືອນ, ງວດ ຂອງທຸກໆປີ;
20. ຂຶ້ນແຜນ ແລະ ສະຫຼຸບການເຄື່ອນໄຫວວຽກງານປະຈຳອາທິດ, ເດືອນ, ງວດ ແລະ ປີ ຂອງພະແນກ;
21. ປະຕິບັດ ສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງຄະນະກົມ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 13 ຫຼັກການ**

ກົມຄົ້ນຄວາມຖີ່ວິທະຍຸສື່ສານ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະກ່ຽວກັບ ບັນຫາລວມຂອງກົມຄົ້ນຄວາມຖີ່ວິທະຍຸສື່ສານ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງໃຫ້ບຸກຄົນຮັບຜິດຊອບ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງພະນັກງານລັດຖະກອນ ທຸກລະດັບ;
3. ທຸກການເຄື່ອນໄຫວວຽກງານ ແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມ ຂອງພັກ-ລັດ, ນຳເອົາແນວທາງນະໂຍບາຍ ຂອງພັກ-ລັດຖະບານ ແລະ ນຳເອົາແຜນການປະຈຳປີ, ແຜນການ 05 ປີ ຂອງກະຊວງ ຕສ, ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

**ມາດຕາ 14 ແບບແຜນວິທີເຮັດວຽກ.**

ກົມຄົ້ນຄວາມຖີ່ວິທະຍຸສື່ສານ ມີແບບແຜນວິທີການເຮັດວຽກ ດັ່ງນີ້:

1. ເຮັດວຽກມີແຜນງານ, ແຜນການ ແລະ ໂຄງການລະອຽດ, ແກ້ໄຂຢ່າງມີຈຸດສຸມ ແລະ ມີເປົ້າໝາຍ ໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນກັບພາກພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດວຽກງານໃຫ້ໄດ້ຮັບຜົນດີ;
2. ເຮັດວຽກມີການກວດກາ, ຕິດຕາມຊຸກຍູ້, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາຜົນໄດ້ຜົນເສຍ;
3. ປະຕິບັດລະບອບປະຊຸມ ແລະ ສ່ອງແສງຂອງກົມ ປະຈຳອາທິດ, 03 ເດືອນ, 06 ເດືອນ, ປີ ໂດຍມີ ການເຂົ້າຮ່ວມຂອງຄະນະພະແນກ ຫຼື ທັງໝົດກົມ ເພື່ອສະຫຼຸບຕີລາຄາ ແລະ ກຳນົດການເຄື່ອນ ໄຫວໃນຕໍ່ໜ້າໃນແຕ່ລະໄລຍະແລ້ວ ສັງລວມລາຍງານໃຫ້ກະຊວງຢ່າງເປັນປົກກະຕິ;
4. ປະຕິບັດການພົວພັນປະສານງານ ພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບການ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 15 ງົບປະມານ ແລະ ຕາປະທັບ**

ກົມຄົ້ນຄວ້າມຖໍ່ວິທະຍຸສື່ສານ ມີງົບປະມານ ແລະ ຕາປະທັບ ເພື່ອຮັບໃຊ້ການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 16 ການຈັດຕັ້ງປະຕິບັດ**

ບັນດາການຈັດຕັ້ງທີ່ຂຶ້ນກັບ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ແລະ ທຸກພາກສ່ວນ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 17 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງສະບັບເລກທີ 188/ກຕສ, ລົງວັນທີ 2 ກຸມພາ 2022.

ລັດຖະມົນຕີ

ສັນຕິສຸກ ສິມມາລາວົງ